# ບົດສັງເຂບດ້ານນະໂຍບາຍ

## ການແກ້ໄຂຜົນກະທົບຈາກການສິ້ນສຸດໂກຕ້າ ສໍາລັບການສົ່ງອອກ ແລະ ນໍາເຂົ້າ ຜະລິດຕະພັນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ຕໍ່ ສປປ ລາວ



## *ການປະເມີນ ສະພາບແວດລ້ອມດ້ານນະໂຍບາຍການຄ້າ ແລະ ນະໂຍບາຍອຸດສາຫະກໍາ ໃນ ສປປ ລາວ*

*ເກືອບເຂົ້າສອງທົດສະວັດທີ່ ສປປ ລາວ ດໍາເນີນການປ່ຽນແປງໄປສູ່ເສດຖະກິດຕະຫຼາດພາຍໃຕ້ນະໂຍບາຍກົນໄກເສດຖະກິດໃໝ່. ເປົ້າໝາຍຂອງລັດຖະບານລາວ ແມ່ນເພື່ອຫຼຸດພົ້ນປະເທດອອກຈາກຄວາມເປັນປະເທດດ້ອຍ ພັດທະນາພາຍໃນປີ 2020. ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ, ສປປ ລາວໄດ້ຕັ້ງເປົ້າໝາຍເພື່ອບັນລຸອັດຕາ ການ ຈະເລີນເຕີບໂຕທາງດ້ານເສດຖະກິດທີ່ສໍາຄັນ, ໂດຍສະ ເລ່ຍ ປະມານ 7-8 ເປີເຊັນຕໍ່ປີ. ໜຶ່ງໃນອົງປະກອບ ອັນ ສໍາຄັນຂອງຂະບວນການເຕີບໂຕນີ້ ແມ່ນການສົ່ງອອກ; ຊຶ່ງອຸດສາຫະກໍາ ແລະ ການຄ້າເປັນຂະແໜງການ ຂັບເຄື່ອນອັນສໍາຄັນຕໍ່ການເຕີບໂຕນີ້. ຈຸດໃຈກາງຂອງການສຶກສານີ້ ເພື່ອຍົກໃຫ້ເຫັນບັນຫາ ສະພາບແວດລ້ອມດ້ານນະໂຍບາຍການຄ້າ ແລະ ນະໂຍບາຍອຸດສາຫະກໍາໃນ ສປປ ລາວ ໂດຍສຸມໃສ່ ສີ່ຂະແໜງການຄື: ຂະແໜງ ເຄື່ອງຕັດຫຍິບ, ຫັດຖະກໍາ, ອຸດສາຫະກໍາປຸງແຕ່ງອາຫານ ແລະ ຂະແໜງການທ່ອງທ່ຽວ. ຈຸດປະສົງຕົ້ນຕໍຂອງ ການສຶກສານີ້ ແມ່ນ ເພື່ອສຶກສາສະພາບແວດລ້ອມດ້ານນະໂຍບາຍ ເພື່ອຊີ້ໃຫ້ເຫັນເຖິງຂໍ້ຈໍາກັດທີ່ສ້າງອຸປະສັກໃນ ຕ່ອງໂສ້ມູນຄ່າ ແລະ ເພີ່ມຕົ້ນທຶນຂອງການດໍາເນີນທຸລະກິດ ແລະ ການສົ່ງອອກໃນສປປ ລາວ.*

### ສະພາບແວດລ້ອມດ້ານນະໂຍບາຍການຄ້າ

ການຫັນເປັນເສດຖະກິດຕະຫຼາດເລີ່ມຕົ້ນໃນປີ 1986 ແລະ ເພີ່ມທະວີຄວາມກ້າວໜ້າໃນທ້າຍປີ 1990 ໂດຍການ ເຂົ້າຮ່ວມເປັນສະມາຊິກປະຊາຄົມ ອາຊຽນ ແລະ ສືບຕໍ່ພະຍາຍາມໃນການສະໝັກເຂົ້າເປັນສະມາຊິກ ອົງການ ການຄ້າໂລກ (ອຄລ). ສປປ ລາວ ນໍາໃຊ້ນະໂຍບາຍການຄ້າແບບເປີດກວ້າງ. ອັດຕາພາສີໂດຍປຽບທຽບ ແມ່ນ ຕໍ່າ ແລະ ມີໂຄງສ້າງຂອງອັດຕາ ພາສີ ທີ່ບໍ່ຊັບຊ້ອນ. ອັດຕານໍາໃຊ້ໃນປະຈຸບັນ ໂດຍສະ ເລ່ຍ ແມ່ນ 11% ໂດຍມີ ອັດຕາພາສີສູງສຸດຄື 40%. ພາຍໃຕ້ ເຂດການຄ້າເສລີອາຊຽນ, ອັດຕາພາສີສິນຄ້າ ເກືອບ 95% ຂອງລາຍການສິນຄ້າທັງໝົດຈະຫຼຸດລົງ ເຫຼືອ 0-5% ພາຍໃນປີ 2008. ພ້ອມນັ້ນ, ສປປ ລາວ ສືບຕໍ່ການເຊື່ອມໂຍງເສດຖະກິດ ຕົນເອງກັບພາກພື້ນ ແລະ ລະບົບການຄ້າສາກົນ. ສໍາລັບອຸປະສັກ ທີ່ບໍ່ແມ່ນອັດຕາພາສີ, ການຂໍອະນຸຍາດສົ່ງອອກ ໄດ້ຖືກລຶບລ້າງ ຢ່າງກ້າວໜ້າ ແລະ ການຂໍອະນຸຍາດນໍາເຂົ້າໄດ້ມີການ ເຮັດໃຫ້ ສະດວກຂຶ້ນ; ເຖິງຢ່າງໃດກໍຕາມ, ມີຫຼາຍບັນ ຫາທີ່ຈະຕ້ອງແກ້ໄຂ ເພື່ອສ້າງຄວາມໂປ່ງໃສ ແລະ ຂໍ້ກໍານົດກົດໝາຍດ້ານການຄ້າທີ່ ເໝາະສົມ.

### ສະພາບແວດລ້ອມນະໂຍບາຍອຸດສາຫະກໍາ

ຂະບວນການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ຍັງຂາດການວາງແຜນໄລຍະຍາວທີ່ເປັນລະບົບຄົບຊຸດ ໂດຍສະເພາະແມ່ນສະພາບແວດລ້ອມສົ່ງເສີມ ອຸດສາຫະກໍາ ແລະ ບັນຫາອຸດສາຫະກໍາທີ່ຕໍ່ເນື່ອງ. ສະພາບ ແວດລ້ອມທີ່ສົ່ງເສີມອຸດສາຫະກໍາ ປະກອບມີການພັດທະນາບຸກຄະລາກອນທີ່ເປັນລະບົບສໍາລັບອຸດສາຫະກໍາ ທີ່ເປັນເປົ້າໝາຍເພື່ອການພັດທະນາ, ການພັດທະນາຜູ້ປະກອບການ, ພື້ນຖານໂຄງລ່າງ ແລະ ການປັບປຸງລະບຽບກົດໝາຍທີ່ກ່ຽວຂ້ອງເຊັ່ນ: ກົດໝາຍລົງທຶນ, ກົດໝາຍທີ່ດິນ, ສິ່ງຊຸກຍູ້ທາງດ້ານອາກອນ. ອຸດສາຫະກໍາທີ່ ຕໍ່ເນື່ອງ ລວມມີ ອຸດສາຫະກໍາຕົ້ນນໍ້າ ແລະ ອຸດສາຫະກໍາປາຍນໍ້າ ເພື່ອສະໜັບສະໜູນ ຕ່ອງໂສ້ມູນຄ່າຂອງອຸດ ສາຫະກໍາເປົ້າໝາຍ ຕົວຢ່າງ: ຜູ້ສະໜອງ, ຜູ້ຈັດຈໍາໜ່າຍ ແລະ ສະຖາບັນການເງິນ. ໃນປະຈຸບັນນີ້, ອຸດສາຫະ ກໍາບໍ່ແຮ່ ແລະ ໄຟຟ້າເປັນອຸດສາຫະກໍາເປົ້າໝາຍໃນຂະນະທີ່ອຸດສາຫະກໍາເຄື່ອງຕັດຫຍິບ ໄດ້ຮັບການເອົາໃຈໃສ່ໜ້ອຍລົງ. ເຖິງຢ່າງໃດກໍຕາມ, ສອງອຸດສາຫະກໍານີ້ ຮຽກຮ້ອງໃຫ້ມີການເອົາໃຈໃສ່ເຖິງຄວາມຍືນຍົງ ລວມທັງບັນຫາສິ່ງແວດລ້ອມ ແລະ ການພັດທະນາຊັບພະຍາກອນມະນຸດໃນໄລຍະຍາວ.

### ບັນຫາຫຍຸ້ງຍາກໃນການດໍາເນີນທຸລະກິດໃນ ສປປ ລາວ

ການສຶກສານີ້ ດໍາເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈໍາ ໂຄລົມໂບ.

ຂັ້ນຕອນຍັງຄົງມີຄວາມຫຍຸ້ງຍາກ ແລະຄ່າໃຊ້ຈ່າຍສູງ. ສິ່ງນີ້ລວມມີ ຂໍ້ຈຳກັດທາງດ້ານການສະໜອງ, ຕົ້ນທຶນ ສິ່ງອຳນວຍຄວາມສະດວກພື້ນຖານໂຄງລ່າງສູງ ໂດຍສະເພາະການຂົນສົ່ງ ແລະການສື່ສານ ແລະບັນຫາຫຍຸ້ງຍາກ ໃນຂັ້ນຕອນການນຳເຂົ້າ-ສົ່ງອອກ, ຕົວຢ່າງ: ການແຈ້ງພາສີ. ອຸປະສັກອື່ນໆ ລວມມີການຂໍອະນຸຍາດ, ການລົງທະບຽນຊັບສິນ, ການເຂົ້າເຖິງເງິນທຶນໃນສະຖາບັນການເງິນທົ່ວໄປ, ແລະຂັ້ນຕອນເອກະສານ ຫຼາຍຂອດ ເພື່ອຈະໄດ້ຮັບນະໂຍບາຍສົ່ງເສີມໃນການລົງທຶນ. ພ້ອມກັນນັ້ນ, ໜຶ່ງໃນຂໍ້ຈຳກັດຍັງ ແມ່ນ ໄລຍະເວລາ ທີ່ໃຊ້ໃນການສ້າງຕັ້ງທຸລະກິດ, ຊຶ່ງ ຫຼຸດລົງຢ່າງເດັ່ນຊັດ ໃນປີ 2006 ມາເປັນ 163 ວັນຈາກ198ວັນ ໃນປີກ່ອນ. ສິ່ງນີ້ຍັງຄົງໃຊ້ເວລາຫຼາຍ ກວ່າບັນດາປະເທດສ່ວນໃຫຍ່ໃນຕາເວັນອອກສ່ຽງໃຕ້. ນອກຈາກນັ້ນ, ຍັງມີລະດັບປະ ສິບການຂອງຜູ້ປະກອບການ, ລະ ດັບເຕັກນິກ ແລະທັກສະຂອງແຮງງານຍັງຕ່ຳ ຊຶ່ງເຮັດໃຫ້ມີ ຄວາມຫຍຸ້ງຍາກຂຶ້ນຕື່ມເພື່ອແຂ່ງຂັນກັບບັນດາປະເທດອ້ອມ ຂ້າງທີ່ພັດທະນາແລ້ວ ແລະມີປະສົບການກວ່າໃນພາກພື້ນ.

## ການເຕີບໂຕຂອງທຸລະກິດ

ມາຮອດປະຈຸບັນນີ້, ທຸລະກິດໃນ ສປປ ລາວ ປະກອບມີວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢ່າງ ຫຼວງຫຼາຍ. ຈາກການສຳຫຼວດ 390 ວິສາຫະກິດໃນປີ 2005, 58% ເປັນວິສາຫະກິດຂະໜາດນ້ອຍ ມີພະນັກງານ 319 ຄົນ ແລະ 21% ເປັນວິສາຫະກິດຈຸລະພາກ ມີພະນັກງານ 12 ຄົນ. ນີ້ສະແດງໃຫ້ເຫັນເຖິງຂໍ້ຈຳກັດທີ່ ໃຫຍ່ຫຼວງຕໍ່ການເຕີບໂຕຂອງຂະໜາດບໍລິສັດ. ສາເຫດຕົ້ນຕໍ ສ່ວນໜຶ່ງມາຈາກຕົ້ນທຶນທີ່ສູງຂອງການບໍລິການ ທີ່ຈຳເປັນ, ໂດຍສະເພາະ ແມ່ນການຂົນສົ່ງ ແລະ ໂທລະຄົມມະນາຄົມ, ແລະ ການເຂົ້າເຖິງເງິນທຶນ. ການສຶກສານີ້ ພົບວ່າ ຂໍ້ຈຳກັດດ້ານການສະໜອງ ເປັນອຸປະສັກອັນສຳຄັນໃນການພັດທະນາ ຂະແໜງອຸດສາຫະກຳທີ່ນຳໃຊ້ ແຮງງານທີ່ສົ່ງຜົນກະທົບຕໍ່ສັງຄົມຢ່າງສູງ ເຊັ່ນ: ອຸດສາຫະກຳເຄື່ອງຕັດຫຍິບ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງອາຫານ ແລະ ການທ່ອງທ່ຽວ. ຂໍ້ຈຳກັດເຫຼົ່ານັ້ນລວມມີ ການຂາດແຄນວັດຖຸດິບ; ການອຸດສາຫະກຳທີ່ສົ່ງເສີມກັນແລະກັນ; ຂໍ້ກຳຈັດໃນການເຂົ້າເຖິງຂໍ້ມູນຂອງຕະຫຼາດ; ບັນຫາໜັກໜ່ວງແມ່ນການເຂົ້າເຖິງເງິນທຶນແລະການ ບໍລິການຂອງທະນາຄານ; ສູນຝຶກອົບຮົມແຮງງານມີບໍ່ພຽງພໍ ເພື່ອສະໜອງຕາມຄວາມຕ້ອງການສະເພາະຂອງ ອຸດສາຫະກຳ ແລະ ການບໍລິການດ້ານພື້ນຖານໂຄງລ່າງທີ່ອ່ອນແອ.

ບັນຫາແມ່ນຍິ່ງເພີ່ມທະວີຂຶ້ນ ຈາກຂໍ້ຫຍຸ້ງຍາກທາງດ້ານຂໍ້ກຳນົດກົດໝາຍ. ຂັ້ນຕອນໃນການສ້າງຕັ້ງທຸລະກິດ ແມ່ນ ໃຊ້ເວລາດົນ ແລະ ມີຄ່າໃຊ້ຈ່າຍສູງ; ການອະນຸຍາດນຳເຂົ້າ ແລະ ຂໍ້ກຳນົດກ່ຽວກັບການສົ່ງອອກ ແມ່ນຍັງບໍ່ສອດ ຄ່ອງກັບຫຼັກການສາກົນ ແລະ ຮຽກຮ້ອງໃຫ້ປັບປຸງແກ້ໄຂເພື່ອໃຫ້ສອດຄ່ອງກັບຫຼັກການຂອງອົງການການຄ້າໂລກ ໃນຂະບວນການສະໝັກເຂົ້າເປັນສະມາຊິກ ອົງການການຄ້າໂລກ ຂອງ ສປປ ລາວ. ພ້ອມນັ້ນ, ການແຈ້ງພາສີ ແລະ ລະບົບອາກອນ ຈຳເປັນຕ້ອງໄດ້ປັບປຸງ ແກ້ໄຂ ເພື່ອສ້າງຄວາມແນ່ນອນ ແລະ ສາມາດຄາດການໄດ້ສຳລັບການດຳເນີນທຸລະກິດ. ເຖິງແມ່ນວ່າ ການຍົກເວັ້ນພາສີນຳເຂົ້າສຳລັບນັກລົງທຶນ ເພື່ອນຳເຂົ້າອຸປະກອນການຜະລິດ ແລະວັດຖຸດິບສຳລັບ ການຜະລິດເພື່ອສົ່ງອອກ; ຂັ້ນຕອນການຂໍນະໂຍບາຍສົ່ງເສີມນີ້ ແມ່ນໃຊ້ເວລາດົນ ແລະ ບໍ່ໂປ່ງໃສ. ນອກນີ້, ຍັງມີການຂາດຈິດສຳນຶກກ່ຽວກັບຄວາມສຳຄັນຂອງການພັດທະນາພາກເອກະຊົນ. ກົນໄກການຮ່ວມມືລະຫວ່າງ ພາກລັດ-ເອກະຊົນຈະຕ້ອງໄດ້ສ້າງໃຫ້ເຂັ້ມແຂງ ເພື່ອສ້າງບັນຍາກາດທີ່ເອື້ອອຳນວຍຕໍ່ການລົງທຶນ ແລະ ການດຳເນີນ ທຸລະກິດ.

## ການປະເມີນແຕ່ລະຂະແໜງການສະເພາະ

### *ຂະແໜງອຸດສາຫະກຳເຄື່ອງຕັດຫຍິບ:*

ໂດຍອີງໃສ່ນະໂຍບາຍອຸດສາຫະກຳ, ບໍ່ມີການເອົາໃຈໃສ່ຢ່າງພຽງພໍເພື່ອ ສົ່ງເສີມອຸດສາຫະກຳຕົ້ນນຳ (ອຸດສາຫະກຳສະໜອງ ວັດຖຸດິບ, ຊິ້ນສ່ວນ...) ແລະ ການສ້າງອຸດສາຫະກຳສົ່ງເສີມ ສຳລັບຂະແໜງເຄື່ອງຕັດຫຍິບ. ຄວນຈະຕ້ອງກຳນົດນະໂຍບາຍທີ່ຈະແຈ້ງ ເພື່ອສ້າງອຸດສາຫະກຳສາມາດສະໜັບສະໜູນ, ເພື່ອຈະສາມາດສະໜອງແຜ່ນແພ ໃນເວລາລູກຄ້າສັ່ງຊື້ກະທັນຫັນ. ພ້ອມນັ້ນ, ຍັງມີຂໍ້ຂັດແຍ່ງລະຫວ່າງ ຈຸດປະສົງ ຂອງນະໂຍບາຍສຳລັບການຍົກເວັ້ນພາສີນຳເຂົ້າ, ຊຶ່ງມຸ່ງເນັ້ນເພື່ອເຮັດໃຫ້ຕົ້ນທຶນໃນການຜະລິດຕ່ຳ ແລະ ນຳໄປສູ່ ການແຂ່ງຂັນທາງດ້ານລາຄາຂອງວັດຖຸດິບທີ່ນຳເຂົ້າສຳລັບໂຮງງານຕັດຫຍິບ. ມັນເປັນ ສິ່ງສຳຄັນຍິ່ງສຳລັບ ລັດຖະບານເພື່ອຊຸກຍູ້ ແລະ ສ້າງອຸດສາຫະກຳສົ່ງເສີມກັນ ແລະ ກັນ ໂດຍການໃຫ້ນະ ໂຍບາຍສົ່ງເສີມ ແລະ ປັບປຸງຂັ້ນຕອນການບໍລິຫານຈັດການ. ສຳລັບນະໂຍບາຍການຄ້າ, ມັນເປັນສິ່ງສຳຄັນທີ່ສຸດ ເພື່ອສ້າງສະ ພາບແວດລ້ອມທີ່ເອື້ອອຳນວຍໃນການດຳເນີນທຸລະກິດ ໂດຍການເຮັດໃຫ້ຂໍ້ ກຳນົດກົດໝາຍໃນການນຳເຂົ້າສະດວກຂຶ້ນ, ໂດຍສະເພາະ ແມ່ນການນຳເຂົ້າເຄື່ອງຈັກ ແລະ ວັດຖຸດິບ; ເຮັດໃຫ້ເວລາໃນການແຈ້ງພາສີສັ້ນເຂົ້າ; ຮັບປະກັນ ການປະຕິບັດທີ່ສອດຄ່ອງກັນໃນທຸກດ່ານພາສີ; ແລະກະຈາຍອຳນາດໃຫ້ໜ່ວຍງານ ໃນການອອກ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.


ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.

### *ອຸດສາຫະກຳຫັດຖະກຳ:*

ຂະແໜງນີ້ຂາດ ອຸດສາຫະກຳທີ່ສົ່ງເສີມກັນ ໂດຍສະເພາະ ແມ່ນ ໄໝ; ເຖິງແມ່ນວ່າ ມີໂຄງການຜະລິດໄໝຫຼາຍໂຄງການ, ມີການ ຄາດວ່າ ການສະໜອງໄໝໄດ້ປະມານ 10-15% ຂອງຄວາມ ຕ້ອງການເພື່ອການຜະລິດພາຍໃນ. ບັນຫາທີ່ຄ້າງຄາບ່ອນວ່າ ພາກສ່ວນທີ່ກ່ຽວຂ້ອງບໍ່ໄດ້ລົງທຶນ ໃນການວິໄຈ ແລະ ພັດທະນາ ຢ່າງພຽງພໍ ເພື່ອປັບປຸງລະດັບການຜະລິດຂອງເສັ້ນໄໝ ຖ້າຫາກ ວ່າ ຫັດຖະກຳໄໝເປັນ ຂະແໜງການອັນສຳຄັນຂອງ ສປປ ລາວ. ຂະແໜງການນີ້ ອາໄສການເພາະປູກທີ່ເປັນພື້ນຖານງ່າຍໆ ຊຶ່ງຈຳ ເປັນ ຕ້ອງໄດ້ປັບປຸງ ຖ້າຫາກຄວາມຕ້ອງການຜະລິດຕະພັນໄໝນີ້ ໃນປະລິມານຫຼາຍ. ການຂາດຄວາມຊຳນານ ແລະ ປະສົບການ ໃນຂະແໜງການຄ້າຜ່ານອີເລັກໂທຣນິກ ຍັງເປັນບັນຫາທົ່ວໄປ, ແລະ ການໂຄສະນາສິນຄ້າຍັງຢູ່ແຕ່ ພາຍໃນປະເທດ. ເປັນທີ່ ຍອມຮັບໂດຍທົ່ວໄປວ່າ ບໍລິສັດຂອງລາວ ປະສົບບັນຫາຫຍຸ້ງ ຍາກໃນການຫາຜູ້ຕ່ຳຫູກ ທີ່ມີທັກສະ ເນື່ອງຈາກວ່າ ທັກສະດັ່ງ ກ່າວ ແມ່ນສືບທອດມາຈາກລຸ້ນໜຶ່ງສູ່ລຸ້ນໜຶ່ງພາຍໃນຄອບຄົວ. ພ້ອມນັ້ນ, ຍັງບໍ່ທັນມີໂຮງຮຽນວິຊາຊີບທີ່ສອນເຕັກນິກຂອງການ ຕ່ຳຫູກແບບຄົບຊຸດເພື່ອສົ່ງເສີມໃຫ້ອຸດສາຫະກຳນີ້ ແລະ ບໍ່ມີ ລະ ບົບການຄວບຄຸມຄຸນະພາບ ຫຼື ການພັດທະນາຊື່ເຄື່ອງໝາຍການ ຄ້າ. ຈາກການສຳພາດຂອງຄະນະວິໄຈ ຊີ້ໃຫ້ເຫັນວ່າ ສູນການ ອອກແບບຫັດຖະກຳ ແລະ ເຄື່ອງຈັກສານໃນ ສປປ ລາວ ຄວນ ຈະຖືກສ້າງຂຶ້ນ ຖ້າຫາກ ຕ້ອງການຮັກສາເຕັກນິກການຕ່ຳຫູກ ແລະ ຈັກສານອັນເປັນວັດທະນະທຳດັ້ງເດີມເອົາໄວ້. ເພື່ອຮັບປະ ກັນ ມາດຕະຖານທີ່ສອດຄ່ອງກັນ, ທາງເລືອກທີ່ດີທາງໜຶ່ງແມ່ນ ສ້າງຕັ້ງໜ່ວຍງານເພື່ອເຮັດ ໃຫ້ມີມາດຕະຖານ ໃນການຜະລິດ ແລະ ອອກໃບຢັ້ງຢືນສຳລັບຜະລິດຕະພັນໄໝຂອງລາວ.

### *ອຸດສາຫະກຳປຸງແຕ່ງອາຫານ:*

ອຸດສາຫະກຳໄດ້ສຸມໃສ່ການຜະລິດເບຍ, ນ້ຳຫວານ, ນ້ຳຕານ, ຊາ, ກາເຟ, ໝາກໄມ້ ແລະ ຜັກ. ບັນຫາປະກອບດ້ວຍ ຂໍ້ຈຳກັດ ທາງດ້ານສະໜອງ ເພື່ອການປຸງແຕ່ງ; ການຂາດວັດຖຸດິບ ຜະລິດ ໃນລາວ; ຈຳກັດໃນການເຂົ້າເຖິງຂໍ້ມູນຕະຫຼາດ, ການເຂົ້າເຖິງ ແຫຼ່ງເງິນກູ້ແບບທາງການ, ທັກສະ ແລະ ການສຶກສາຂອງແຮງ ງານ; ຂາດອຸດສາຫະກຳສົ່ງເສີມກັນແລະກັນ; ແລະພື້ນຖານໂຄງ ລ່າງ, ຄວາມສາມາດ ແລະມາດຕະຖານຄຸນະພາບບໍ່ພຽງພໍ. ບັນ ຫາຫຍຸ້ງຍາກເຫຼົ່ານີ້ສາມາດຈັດການໄດ້ໂດຍການສ້າງຕັ້ງ ໜ່ວຍ ງານ ເພື່ອຮັບຜິດຊອບການຄວບຄຸມດ້ານການຜະລິດສິນ ຄ້າກະ ສິກຳ, ຫຼືຫ້ອງທົດລອງອາຫານທີ່ປອດໄພ ທີ່ເຮັດໄດ້ຕາມ ມາດຕະ ຖານ ແລະຄວາມຕ້ອງການຂອງສາກົນ. ພ້ອມກັນນັ້ນ, ເພື່ອຈັດການກັບບັນຫາວັດຖຸດິບ ບໍ່ພຽງພໍ, ການສ້າງສັນຍາກັບ ຊາວກະສິກອນຈະຕ້ອງໄດ້ເຮັດໃຫ້ມີຄວາມໜ້າເຊື່ອໝັ້ນ ແລະ ມີ ປະສິດທິຜົນຜ່ານການຝຶກອົບຮົມ ແລະ ນຳໃຊ້ກົນໄກທາງດ້ານ ກົດໝາຍທີ່ມີປະສິດທິພາບເຂົ້າໃນ ຂະບວນການດັ່ງກ່າວ. ມັນ ເປັນສິ່ງສຳ ຄັນທີ່ຈະຕ້ອງໄດ້ ສະໜັບສະໜູນຂະແໜງນີ້ ໂດຍ ການຈັດງານວາງສະແດງເພີ່ມຂຶ້ນ ສຳລັບຜະລິດຕະພັນອາຫານ ປຸງແຕ່ງຂອງລາວ ໃນຕະຫຼາດພາກພື້ນ ແລະ ສາກົນ. ພ້ອມນັ້ນ, ເຊັ່ນດຽວກັບຂະແໜງອຸດສາຫະກຳອື່ນໆ, ການເຮັດໃຫ້ຂັ້ນຕອນ ການປ່ອຍກູ້ມີຄວາມງ່າຍດາຍຂຶ້ນເປັນສິ່ງຈຳເປັນ, ໃນຂະນະທີ່ ຂັ້ນຕອນການແຈ້ງພາສີ ແລະ ເກັບມ້ຽນໃນສາງ ຈະຕ້ອງໄດ້ເອົາ ໃຈໃສ່ປັບປຸງຕື່ມ.

### *ອຸດສາຫະກຳທ່ອງທ່ຽວ:*

ເປັນທີ່ເອກະພາບກັນວ່າ ອຸດສາຫະກຳທ່ອງທ່ຽວໃນ ສປປ ລາວ ຈະຕ້ອງໄດ້ມີການ ປະສານງານກັນດີກວ່າເກົ່າ. ການມີສ່ວນ ຮ່ວມຂອງພາກເອກະຊົນໃນບັນຫາທີ່ກ່ຽວກັບ ນະໂຍບາຍທ່ອງ ທ່ຽວ ຍັງບໍ່ທັນ ຫ້າວຫັນພຽງພໍເທື່ອ; ຂາດການເຊື່ອມຕໍ່ພາຍໃນທຸ ລະກິດທ່ອງທ່ຽວ. ພ້ອມນັ້ນ, ຫ້ອງການທ່ອງທ່ຽວຂອງແຕ່ລະ ພາກຍັງບໍ່ທັນເນັ້ນໜັກໃນການສົ່ງເສີມ ທຸລະກິດການທ່ອງທ່ຽວ ໂດຍການສະໜອງຂໍ້ມູນ ແລະ ການ ປະສານງານ, ແຕ່ກັບໄປມຸ່ງ ເນັ້ນເລື່ອງການສ້າງຂໍ້ກຳນົດກົດລະບຽບ ແລະ ການອອກ ໃບອະ ນຸຍາດທຸລະກິດ ທ່ອງທ່ຽວແທນ. ຍຸດທະສາດສຳລັບບໍລິສັດທ່ອງ ທ່ຽວໃນ ສປປ ລາວ ແມ່ນບໍ່ຊັບຊ້ອນພຽງພໍເທື່ອ. ຕົວຢ່າງ, ຜູ້ດຳ ເນີນການ ທ່ອງທ່ຽວຫຼາຍລາຍສະໜອງ ລາຍການທ່ອງທ່ຽວ ເຊັ່ນດຽວກັນກັບຄູ່ແຂ່ງຂອງຕົນ. ພວກເຂົາບໍ່ໄດ້ ເຂົ້າຫາລູກຄ້າ ໂດຍກົງ ແຕ່ຍັງຮັກສາການເປັນພັນທະມິດທຸລະກິດກັບ ຜູ້ດຳເນີນ ການທ່ອງທ່ຽວໃນຕ່າງປະເທດ. ໂດຍສະຫຼຸບລວມແລ້ວ, ການ ຂາດຍຸດທະສາດການປະສານງານ ເຮັດໃຫ້ທັກສະດ້ານການຕະ ຫຼາດບໍ່ມີປະສິດທິຜົນ.

### ສະຫຼຸບ ແລະ ຄຳຄິດເຫັນ

ເຖິງແມ່ນວ່າຈະບໍ່ສາມາດປະເມີນໄດ້ທາງດ້ານປະລິມານຢ່າງຊັດ ເຈນ ແຕ່ຈາກການສຶກສາເຫັນວ່າ ສີ່ຂະແໜງອຸດ ສາຫະກຳ ພາຍ ໃຕ້ການສຶກສານີ້ ມີທ່າແຮງໃນການຫຼຸດຜ່ອນ ຄວາມທຸກຍາກ, ການກະຈາຍລາຍໄດ້ ໃຫ້ແກ່ຄົນລາວທີ່ອາໄສຢູ່ໃນເຂດຊົນນະ ບົດ. ນະໂຍບາຍການຄ້າ ແລະ ອຸດສາຫະກຳທີ່ເໝາະສົມ ຈະ ຊ່ວຍ ອຳນວຍຄວາມສະດວກໂດຍກົງໃນການພັດທະນາ ສີ່ຂະ ແໜງອຸດສາຫະກຳ ເຫຼົ່ານີ້. ຜົນທີ່ຕາມມາກໍຄືວ່າ ຜະລິດຕະພາບ ໃນການຜະລິດຈະເພີ່ມຂຶ້ນ ແລະ ການສົ່ງອອກຈະໄດ້ຮັບການກະ

ຕຸ້ນໃຫ້ດີຂຶ້ນ. ເຖິງຢ່າງໃດກໍຕາມ, ໃນຄວາມເປັນຈິງຍັງມີຢູ່ວ່າ ສ ປ ປ ລາວ ຍັງເປັນບ່ອນທີ່ບໍ່ງ່າຍໃນການດຳເນີນ ທຸລະກິດເມື່ອທຽບກັບບັນດາປະເທດອື່ນໆ ໃນພາກພື້ນດຽວກັນ. ສ ປ ປ ລາວ ຍັງຢູ່ໃນຊ່ວງຂອງການຂ້າມຜ່ານ, ໃນຂະນະ ທີ່ປະເທດໄດ້ດຳເນີນການປະຕິຮູບ ເພື່ອໃຫ້ສອດຄ່ອງກັບການປະຕິບັດຕາມຫຼັກການສາກົນ ໂດຍການ ເຊື່ອມໂຍງເຂົ້າເສດຖະກິດພາກພື້ນ (ອາຊຽນ) ແລະ ເຂົ້າເປັນສະມາຊິກ ອຄລ.

## ນະໂຍບາຍການຄ້າ:

ໃນຊ່ວງເຂດນີ້ ໄດ້ມີການປັບປຸງຢ່າງຕັ້ງໜ້າສູ່ເສດຖະກິດຕະຫຼາດ ແລະ ການເປີດກວ້າງ ການ ຄ້າ, ໃນຂະນະທີ່ ລະບອບການຄ້າມຸ່ງເນັ້ນສູ່ການຫຼຸດຜ່ອນອັດຕາພາສີ ແລະ ອຸປະສັກທີ່ບໍ່ແມ່ນອັດຕາພາສີ ແລະ ທົບທວນ ແລະ ປັບປຸງຂໍ້ກຳນົດກົດໝາຍ ທີ່ຕິດພັນກັບການຄ້າ. ນະໂຍບາຍນີ້ ສະແດງໃຫ້ເຫັນເຖິງຄວາມກ້າວໜ້າອັນສຳຄັນ ເມື່ອປຽບທຽບສະພາບການໃນປະຈຸບັນກັບອາດີດ. ເຖິງຢ່າງໃດກໍຕາມ, ຍັງຈຳເປັນ ຕ້ອງໄດ້ ພະຍາຍາມເພີ່ມຕື່ມ; ໂດຍການເອົາໃຈໃສ່ພິເສດໃນການເຮັດໃຫ້ຂັ້ນຕອນການນຳເຂົ້າ-ສົ່ງອອກມີຄວາມສະດວກຂຶ້ນ, ຫຼຸດຜ່ອນຄວາມຫຍຸ້ງຍາກທີ່ຕິດພັນກັບການແຈ້ງພາສີ, ແລະ ພັດທະນາຍຸດທະສາດສົ່ງເສີມການສົ່ງອອກ ທີ່ເປັນຮູບປະທຳ. ລັດຖະບານ ຈະຕ້ອງໄດ້ປັບປຸງຂໍ້ກຳນົດກົດໝາຍພາຍໃນໃຫ້ມີຄວາມໂປ່ງໃສ ແລະ ສາມາດຄາດການໄດ້.

## ນະໂຍບາຍອຸດສາຫະກຳ:

ຈັງຫວະຂອງການດັດສົມດ້ານໂຄງສ້າງຂອງຂະແໜງອຸດສາຫະກຳຍັງຊັກຊ້າ, ແລະ ຫຼາຍບັນຫາຍັງຕ້ອງໄດ້ເອົາໃຈໃສ່ຕື່ມກ່ອນທີ່ອຸດສາຫະກຳຂອງລາວສາມາດແຂ່ງຂັນທົ່ວໄປ ໃນເງື່ອນໄຂເທົ່າທຽມກັນກັບຄູ່ແຂ່ງຈາກຕ່າງປະເທດ. ໂດຍທົ່ວໄປແລ້ວ, ນະໂຍບາຍອຸດສາຫະກຳ ຍັງບໍ່ທັນຈະແຈ້ງຊຶ່ງເປັນເຫດຜົນທີ່ ການພັດທະນາອຸດສາຫະກຳໃນອະນາຄົດ ຈະຕ້ອງໄດ້ມີການດັດສົມຢ່າງເໝາະສົມ ເພື່ອປະເຊີນກັບ ສິ່ງທ້າທາຍຈາກຕ່າງປະເທດ. ຄ້າຍກັບວ່າ ມີການແຂ່ງຂັນຢ່າງເຂັ້ມຂຸ້ນໃນບາງລາຍການສິນຄ້າ ແລະ ບໍລິການ, ແລະ ລັດຖະບານ ຕ້ອງຮັບປະກັນ ຂະບວນການການຜະລິດທີ່ນຳໃຊ້ເຕັກໂນໂລຊີທີ່ສາມາດ ແຂ່ງຂັນໄດ້ ແລະ ພັດທະນາຄຸນະພາບມາດຕະຖານ. ມັນເປັນຄວາມຈຳເປັນຢ່າງຍິ່ງສຳລັບ ສປປ ລາວ ທີ່ຈະຕ້ອງ ໄດ້ດັບປັບ ໂຄງສ້າງອຸດສາຫະກຳ, ແລະ ການຜະລິດ ແລະ ກົນໄກດ້ານການຕະຫຼາດ, ເພື່ອທີ່ຈະ ສາມາດເຂົ້າຮ່ວມ ໃນລະບົບ ການຄ້າສາກົນ ແລະ ການລົງທຶນ, ແລະ ປະເທດຄວນພະຍາຍາມ ທີ່ຈະສ້າງຄວາມແຕກຕ່າງໃຫ້ກັບ ສິນຄ້າ ຕົນຈາກມູນຄ່າການຜະລິດຂອງບັນດາປະເທດໃກ້ຄຽງ. ສິ່ງນີ້ໝາຍຄວາມວ່າ ຕະຫຼາດຊ່ອງວ່າງຈະຕ້ອງໄດ້ມີ ການວິເຄາະເພື່ອໃຫ້ສອດຄ່ອງກັບການພັດທະນາ ຂອງສີ່ຂະແໜງອຸດສາຫະກຳ: ເຄື່ອງຕັດຫຍິບ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງອາຫານ ແລະ ການທ່ອງທ່ຽວ.

ມັນເປັນສິ່ງສຳຄັນ ທີ່ຈະຕ້ອງເນັ້ນໜັກວ່າ ນະໂຍບາຍການຄ້າ ແລະ ນະໂຍບາຍອຸດສາຫະກຳ ບໍ່ເປັນພຽງແຕ່ ປັດໄຈທີ່ສ້າງຂໍ້ຈຳກັດ ຫຼື ອຳນວຍຄວາມສະດວກໃຫ້ແກ່ຄວາມສາມາດໃນການແຂ່ງຂັນ ຂອງສີ່ຂະແໜງອຸດສາຫະ ກຳທີ່ກ່າວມາຂ້າງເທິງນັ້ນ; ຄວາມສອດຄ່ອງທາງດ້ານນະໂຍບາຍ ແລະ ການເຊື່ອມໂຍງກັບ ການຄ້າ, ອຸດສາ ຫະກຳ ແລະ ຂະແໜງການອື່ນໆ ກໍມີບົດບາດສຳຄັນເຊັ່ນກັນ. ເພື່ອສ້າງຄວາມສາມາດໃນການແຂ່ງກັນ ໃນເວທີສາກົນ, ສປປ ລາວ ຈະຕ້ອງໄດ້ເພີ່ມ ຜະລິດຕະພາບໃຫ້ແກ່ແຮງງານ ແລະ ພັດທະນາຄວາມສາມາດ ຂອງທ້ອງຖິ່ນ, ລວມທັງການລົງທຶນໃນ ບັນດາສະຖາບັນທາງດ້ານວິຊາການ. ພ້ອມນັ້ນ, ການຍົກລະດັບ ເຕັກໂນໂລຊີ ແລະ ນະວະຕະກຳໃໝ່ ຈະເປັນປັດໄຈອັນສຳຄັນ ເພື່ອຍົກລະດັບຜະລິດຕະພາບໃນການຜະລິດ.

ການສຶກສາ "ການແກ້ໄຂຜົນກະທົບຈາກການລົບລ້າງ ໂກຕາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ໃນ ສປປລາວ" ປະກອບດ້ວຍການສຶກສາສີ່ບົດ:

1. ການປະເມີນການພັດທະນາມະນຸດ ໃນ ສປປ ລາວ ພາຍຫຼັງສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ
2. ການສ້າງຄວາມຫຼາກຫຼາຍ ແລະ ການສ້າງມູນຄ່າເພີ່ມ
3. ການປະເມີນສະພາບແວດລ້ອມດ້ານນະໂຍບາຍການຄ້າ ແລະ ອຸດສາຫະກຳ ໃນ ສປປ ລາວ
4. ຍຸດທະ ສາດການເຈລະຈາ ການຄ້າ.



ຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່ ສູນສະຖິຕິແຫ່ງຊາດ,
ຖະໜົນ ຫຼວງພະບາງ, ນະຄອນຫຼວງວຽງຈັນ, ສປປ ລາວ
*ໂທລະສັບ: +85621 214740, 242022,*
*nscp@etllao.com*
*www.nsc.gov.la*



ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.